# ภาคผนวก


Myanmar
Vietnam
Laos
Gulf of Tonkin
Chieng Mai
Lamphun
Lampang
Sawan Khalok
Phitsanulok
Nong Kai
Khon Kaen
Nakhon Sawan
Ubon Ratchathani
Nakhon Ratchasima
Buriram
Surin
Sisaket
Lop Buri
Ayutthaya
Sara Buri
Nam Tok
Suphan Buri
Bangkok
Andaman Sea
Cambodia
Prachuab Khiri Khan
Chumphon
Gulf of Thailand
Ban Thung Pho Jn.
Surat Thani
Nakhon Si Thammarat
Thung Song Jn.
Khao Chumthong Jn.
Kantang
Hat Yai Jn.
Yala
Thailand Railroad


LAOS
CHINA
Red River
Phongsali
Dien Bien Phu
MYANMAR (BURMA)
Hanoi
Sam Neua
Huay Xai
Luang Prabang
Pakbeng
Muang Kham
Phonsavan
Plain of Jars
VIETNAM
South China Sea
LAOS
Pak Lai
Vientiane
Nong Khai
Mekong River
THAILAND
Ho Chi Minh Trail
Savannakhet
Sepon
Mukdahan
0 100 km
0 60 mi
Salavan
Chong Mek
Pakse
Champasak
Bolaven Plateau
CAMBODIA
© Lonely Planet




# Lao People's Democratic Republic



CHINA
CHINA
Phongsali
VIETNAM
BURMA
Louang Namtha
Xam Nua
Louangphrabang
Xiangkhoang
Phu Bia
Gulf of Tonkin
Ban Nape
VIENTIANE
Mekong
Muang Khammouan
Savannakhet
THAILAND
Salavan
VIET.
Pakxe
0 50 100 km
0 50 100 mi
CAMBODIA

## ข้อมูลทั่วไปเกี่ยวกับ สปป. ลาว (ค.ศ. 2005)

| | |
|---|---|
| **พลเมือง** | ประมาณ 5.60 ล้านคน (ปี ค.ศ. 1998) กรุงเวียงจันทน์เป็นเมืองหลวง มีชนเผ่าต่างๆ รวมกันประมาณ 40 เผ่า หญิงมากกว่าชาย |
| **อัตราการเกิด** | เฉลี่ย 2% |
| **พื้นที่ประเทศ** | 236,800 ตารางกิโลเมตร 2 ใน 3 ส่วนเป็นภูเขาสูง 200 – 2,800 เมตร พื้นที่ป่าไม้ 47% แม่น้ำโขงผ่านยาว 1,865 กิโลเมตร ไม่มีพรมแดนติดทะเล |

**ความหนาแน่นพลเมือง** ประมาณ 20 คนต่อตารางกิโลเมตร

**ความยาวเขตติดต่อ**

| | |
|---|---|
| เวียดนาม | 2,069 กม. |
| ไทย | 1,853 กม. |
| กัมพูชา | 435 กม. |
| จีน | 505 กม. |
| พม่า | 236 กม. |

| | |
|---|---|
| **ศาสนา** | พุทธศาสนา 90% ส่วนที่เหลือนับถือผีและศาสนาอื่นๆ |
| **การใช้พลังงาน** | ใช้ฟืน 80% ศักยภาพการผลิตพลังงานไฟฟ้าจากน้ำ 18,000 MW ผลิตกระแสไฟฟ้าขายให้ไทยและเวียดนาม |
| **วันชาติ** | 2 ธันวาคม |
| **เงินตรา** | สกุลกีบ (Kip)<br>อัตราแลกเปลี่ยน 1 บาท ประมาณ 50 – 270 กีบ (ค.ศ. 2006) |
| **การปกครอง** | ระบอบสังคมนิยมมาร์ก – เลนิน |
| **การเศรษฐกิจ** | เริ่มปรับประเทศเป็นเสรีนิยม ตั้งแต่ปี ค.ศ. 1987<br>ภาคเกษตรกรรม 52% ของ GDP (ค.ศ. 1997) อยู่ระหว่างการขอเป็นสมาชิก WTO เป็นสมาชิกอาเซียน (ASEAN) เมื่อปี ค.ศ. 1997 |
| **การทำเหมืองแร่** | ทองคำ ยิปซั่ม เหล็ก ตะกั่ว สังกะสี ถ่านหิน ดีบุก ทองแดง และอัญมณี |
| **อัตราภาษี** | บริษัท 35% ถ้าได้รับการส่งเสริมคงเหลือ 20%<br>บุคคลธรรมดา 10% คงที่ เช่าที่ดินได้จาก<br>รัฐบาล 50 ปี เอกชน 20 ปีและโอนสิทธิ์ต่อได้ |

## ตราประจำชาติลาว



ตราประจำชาติลาว 2534-ปัจจุบัน

**ตราประจำชาติลาว** แบบปัจจุบันเป็นตราประจำชาติของประเทศลาวที่ใช้มาตั้งแต่ พ.ศ. 2534 หลังจากการใช้นโยบาย จินตนาการใหม่ ด้านล่างมีรูปครึ่งกงจักรเป็นฟันเฟือง และโบว์สีแดง เขียนอักษรลาวว่า "สาทาละนะลัด ปะซาทิปะไต ประซาซนลาว" สองข้างล้อมรอบด้วยรวงข้าวสุก และโบว์สีแดง มีอักษรลาวเขียนไว้ว่า "สันติพาบ เอกะลาด ปะซาทิปะไต เอกะพาบ วัดทะนาถาวอน" ระหว่างกลางของปลายรวงข้าว มีรูปพระธาตุหลวง เวียงจันทน์ ซึ่งเป็นปูชนียสถานที่สำคัญของลาว ตรงกลางรูปมีถนน ทุ่งนา ป่าไม้ และเขื่อนไฟฟ้าน้ำตก

### ตราประจำชาติลาวในอดีต
### ตราประจำสาธารณรัฐประชาธิปไตยประชาชนลาว พ.ศ. 2518-2534



ตราประจำชาติลาว 2518-2534

ตราประจำชาติลาวในยุคนี้มีลักษณะโดยรวมคล้ายคลึงกับตราแบบปัจจุบัน แต่ระหว่างกลางของรูปปลายรวงข้าวเป็นรูปดาวห้าแฉกเหนือค้อนเคียวไขว้ (สัญลักษณ์ขบวนการคอมมิวนิสต์สากล) และรูปเสาไฟฟ้าอยู่เหนือเขื่อนไฟฟ้า ส่วนคำขวัญของประเทศในโบว์สีแดงนั้นเขียนว่า "สันติพาบ เอกะลาด เอกะพาบ สังคมนิยม"

## ธงชาติลาวสมัยพระราชอาณาจักรลาว



ธงชาติลาว 2495-2518

ธงชาติลาวสมัยพระราชอาณาจักรมีลักษณะเป็นธงรูปสี่เหลี่ยมผืนผ้าสีแดง มีรูปช้างเอราวัณ 3 เศียรสีขาวยืนอยู่บนแท่น 5 ชั้นภายใต้พระมหาเศวตฉัตร 9 ชั้น ธงนี้ใช้เป็นธงชาติลาวในช่วงปี พ.ศ. 2495 ถึง พ.ศ. 2518 ปัจจุบันนี้ขบวนการลาวฝ่ายขวานิยมกษัตริย์ยังใช้เพื่อเป็นสัญลักษณ์ในการเคลื่อนไหวเพื่อสร้างประชาธิปไตยในลาวและการคงอยู่ของรัฐบาลพระราชอาณาจักรลาวพลัดถิ่น

ในสมัยที่ฝรั่งเศสปกครองลาวในฐานะอาณานิคมอยู่นั้น ธงนี้จะมีรูปธงชาติฝรั่งเศสขนาดเล็กอยู่มุมธงด้านติดคันธงอยู่ด้วย

**ความหมายของธงชาติลาวสมัยพระราชอาณาจักรลาว**

- รูปช้างเอราวัณ 3 เศียร หมายถึง เอกภาพของชาติ อันเกิดจากการรวมราชอาณาจักรลาวล้านช้างในอดีต 3 อาณาจักร คือ ราชอาณาจักรลาวล้านช้างหลวงพระบาง ราชอาณาจักรลาวล้านช้างเวียงจันทน์ และราชอาณาจักรลาวล้านช้างจำปาสัก เข้าเป็นราชอาณาจักรลาวเพียงหนึ่งเดียวภายใต้การปกครองของราชอาณาจักรลาวล้านช้างร่มขาวหลวงพระบาง
- รูปพระมหาเศวตฉัตร หมายถึง เขาพระสุเมรุอันเป็นศูนย์กลางของจักรวาลในศาสนาพุทธ (โดยนัยน่าจะหมายถึงอำนาจการปกครองของกษัตริย์ราชวงศ์ลาวหลวงพระบางในอาณาจักรลาวทั้ง 3 แห่ง)

# ประเทศลาว

## ธงชาติลาว



ธงชาติลาว อัตราส่วนธง 2 : 3

**ธงชาติลาว** เป็นธงชาติของประเทศลาวที่ใช้มาตั้งแต่ 2 ธันวาคม พ.ศ. 2518 ลักษณะเป็นธงรูปสี่เหลี่ยมผืนผ้า กว้าง 2 ส่วน ยาว 3 ส่วน มีแถบสีแดง น้ำเงินเข้ม แดง ตามแนวนอน โดยที่แถบสีแดงกว้างเป็น 1 ใน 2 ส่วนของแถบสีน้ำเงินเข้ม ตรงกลางแถบสีน้ำเงินมีรูปพระจันทร์สีขาว กว้าง 4 ใน 5 ส่วนของแถบสีน้ำเงินนั้น ธงนี้มีชื่อเรียกในภาษาลาวว่า ธงวงเดือน และได้รับการออกแบบขึ้นในช่วงสงครามโลกครั้งที่ 2 โดย มหาสิลา วีระวงศ์ นักปราชญ์ผู้ยิ่งใหญ่ของชาวลาว

อนึ่ง ธงนี้เป็นหนึ่งในธงของประเทศที่ปกครองด้วยรัฐบาลคอมมิวนิสต์ที่ไม่มีสัญลักษณ์รูปค้อนเคียวของขบวนการคอมมิวนิสต์สากล ซึ่งมีอยู่น้อยมาก

**ความหมายของธงชาติลาว**

สีแดง หมายถึง เลือดแห่งการต่อสู้เพื่ออิสรภาพของชาวลาว

สีน้ำเงิน หมายถึง ความมั่งคั่งอุดมสมบูรณ์ของชาติ

พระจันทร์สีขาว เป็นสัญลักษณ์ของดวงจันทร์ลอยเด่นเหนือลำน้ำโขง และหมายถึงเอกภาพของชาติภายใต้การปกครองของรัฐบาลพรรคประชาชนปฏิวัติลาว (พรรคคอมมิวนิสต์ลาว) หรือหมายถึงการกลับมารวมกันอีกครั้งของชาวลาวสองฝั่งโขง

# ເພງຊາດ



## เนื้อร้อง

### ถ่ายเสียงเป็นอักษรไทย

ซาดลาวตั้งแต่ใดมา ลาวทุกถ้วนหน้าเชิดซูสุดใจ
ฮ่วมแฮงฮ่วมจิดฮ่วมใจ สามักคีกันเป็นกำลังเดียว
เด็ดเดี่ยวพ้อมกันก้าวหน้า บูซาซูเกียดของลาว
ส่งเสริมใช้สิดเป็นเจ้า ลาวทุกซนเผ่าสะเหมอพาบกัน
บ่ให้ผู่งจักกะพัด และพวกขายซาดเข้ามาลบกวน
ลาวทั้งมวนซูเอกะลาด อิดสะละพาบของซาดลาวไว้
ตัดสินใจสู้ซิงเอาไซ พาซาดก้าวไปสู่ความวัดทะนา

### ถ่ายรูปอักษรเป็นอักษรไทย

ชาติลาวตั้งแต่ใดมา ลาวทุกถ้วนหน้าเชิดชูสุดใจ
ร่วมแรงร่วมจิตร่วมใจ สามัคคีกันเป็นกำลังเดียว
เด็ดเดี่ยวพร้อมกันก้าวหน้า บูชาเกียรติของลาว
ส่งเสริมใช้สิทธิ์เป็นเจ้า ลาวทุกชนเผ่าเสมอภาพกัน
บ่ให้ผู่งจักรพรรดิ์ และพวกขายชาติเข้ามารบกวน
ลาวทั้งมวลชูเอกราช อิสรภาพของชาติลาวไว้
ตัดสินใจสู้ชิงเอาชัย พาชาติก้าวไปสู่ความวัฒนา

### เงินตรา

ประเทศลาว เงินสกุล คือ กีบ แต่สามารถใช้จ่ายเป็นเงินไทย หรือ เงินดอลล่าร์ได้ (ใช้แบงค์ธนบัตร) แต่ถ้าอยู่หลายวัน แนะนำให้ใช้เงินกีบ การใช้จ่าย จะประหยัดกว่าใช้เงินสกุลอื่น อัตราแลกเปลี่ยนเงิน 1 บาทต่อเงินกีบประมาณ 200-250 กีบ (อัตรา 1 บาท/250 กีบ ม.ค.45)

การใช้จ่ายเงินที่ประเทศลาวจะไม่ใช้เหรียญ ใช้แต่แบงค์ธนบัตรเท่านั้น แบงค์ของประเทศลาวมีราคา 50 100 500 กีบ 1,000 กีบ 2,000 กีบ และ 5,000 กีบ อย่างเงิน 20,000 กีบ จะเรียกว่า "ยี่สิบพันกีบ" หรือ "ซาวพันกีบ" ไม่เรียกว่า "สองหมื่นกีบ"

# กีบ (สกุลเงิน)



ธนบัตร 1,000 กีบลาว ถ่ายเมื่อปี พ.ศ. 2539

กีบ เป็นหน่วยเงินของประเทศลาว (รหัสสากลตาม ISO 4217 อักษรย่อ LAK) หนึ่งกีบมี 100 อัดรา

ในปี พ.ศ. 2522 เกิดการปฏิรูปค่าเงินขึ้น โดยเปลี่ยน 100 กีบแบบเก่าให้เท่ากับ 1 กีบในปัจจุบัน อัตราแลกเปลี่ยนเมื่อเดือนเมษายน พ.ศ. 2548 คือ 1 ยูโร เท่ากับ 13,636 กีบ และ 1 ดอลลาร์สหรัฐ เท่ากับ 10,500 กีบ

ธนาคารแห่งสาธารณรัฐประชาธิปไตยประชาชนลาว เป็นผู้รับผิดชอบพิมพ์เงินตราออกใช้

ธนบัตร

- 50,000 กีบ (ห้าสิบพันกีบ)
- 20,000 กีบ (ซาวพันกีบ)
- 10,000 กีบ (สิบพันกีบ)
- 5,000 กีบ
- 2,000 กีบ
- 1,000 กีบ
- 500 กีบ
- 100 กีบ
- 50 กีบ
- 20 กีบ
- 10 กีบ
- 5 กีบ
- 1 กีบ

# ອັກສອນລາວ
# ພະຍັນຊະນະ ໒໗ ໂຕ

























ຄວາຍ
ຄ

ງົວ
ງ

ຈອກ
ຈ

ທຸງ
ທ

ນົກ
ນ

ແບ້
ບ

ຢາ
ຢ

ລີງ
ລ

ວີ
ວ


ສ
ເສືອ

ຊ
ຊ້າງ

ຍ
ຍຸງ

ປ
ປາ

ຜ
ເຜີ້ງ

ຝ
ຝົນ

ຫ
ຫ່ານ

ອ
ໂອ

ຮ
ເຮືອນ

| ພະຍັນຊະນະ ໒໖ ໂຕ ແບ່ງຕາມສຽງ ມີ ໓ ໝູ່ | | | ສະຫຼະ ໒໘ ໂຕ ແບ່ງຕາມສຽງ ມີ ໓ ໝູ່ | | |
|---|---|---|---|---|---|
| ອັກສອນສູງ (໑໒ ໂຕ) ດ່ຽວ ໖ ໂຕ | ອັກສອນກາງ (໘ ໂຕ) | ອັກສອນຕ່ຳ (໑໒ ໂຕ) | ສະຫຼະສຽງສັ້ນ (໑໒ ໂຕ) | ສະຫຼະສຽງຍາວ (໑໒ ໂຕ) | ສະຫຼະພິເສດ (໔ ໂຕ) |
| ຂ | ກ | ຄ | xະ | xາ | ໄx |
| ສ | ຈ | ງ | xິ | xີ | ໃx |
| ຖ | ດ | ຊ | xຶ | xື | ເxົາ |
| ຜ | ຕ | ຍ | xຸ | xູ | xຳ |
| ຝ | ບ | ທ | ເxະ | ເx | |
| ຫ | ປ | ນ | ແxະ | ແx | |
| ຄູ່ ໖ ໂຕ | ຢ | ພ | ໂxະ | ໂx | |
| ຫງ | ອ | ຟ | ເxາະ | xໍ | |
| ຫຍ | | ມ | ເxິ | ເxີ | |
| ຫນ | | ລ | ເxັຍ | ເxຍ | |
| ຫມ | | ວ | ເxືອ | ເxືອ | |
| ຫຼ ຼ ຫລ | | ຣ | xົວະ | xົວ | |
| ຫວ | | | | | |

**ວັນນະຍຸດ**

| | |
|---|---|
| x່ | ເອກ |
| x້ | ໂທ |
| x໊ | ຕີ |
| x໋ | ຈັດຕະວາ |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| ເລກລາວ | ໑ | ໒ | ໓ | ໔ | ໕ | ໖ | ໗ | ໘ | ໙ | ໐ |
| ເລກອາຫລັບ | 1 | 2 | 3 | 4 | 5 | 6 | 7 | 8 | 9 | 0 |

## ບົດທີ 53

# ລະດູຕ່າງໆ ໃນປະເທດເຮົາ

ປະເທດເຮົາ ເປັນດິນແດນທີ່ມີອາກາດ ບໍ່ແຕກຕ່າງກັບປານໃດ ອາດຈະເວົ້າໄດ້ວ່າ ເປັນເຂດທີ່ມີອາກາດອົບອຸ່ນ. ໃນປີໜຶ່ງປະເທດເຮົາມີສອງລະດູຄື ລະດູແລ້ງ ແລະ ລະດູຝົນ.

ລະດູແລ້ງເລີ່ມຕົ້ນຕັ້ງແຕ່ ເດືອນ ຕຸລາ ຫາ ເດືອນ ເມສາ, ຕັ້ງແຕ່ເດືອນພະຈິກ ອາກາດຄ່ອຍໆເຢັນລົງ, ແຕ່ທ້ອງເດືອນ ທັນວາ, ມັງກອນ ຫາເດືອນ ກຸມພາ ເປັນໄລຍະເວລາທີ່ອາກາດເຢັນກວ່າໝູ່ ເຊິ່ງພົນເຮືອນເອີ້ນກັນວ່າ : " ລະດູໜາວ ". ນັບແຕ່ເດືອນ ມີນາ ຫາເດືອນ ເມສາ ແລະ ພຶດສະພາ ເປັນໄລຍະທີ່ມີອາກາດອົບອຸ່ນ ແລະ ຮ້ອນເປັນໄລຍະທີ່ຕົ້ນໄມ້ໃບຫຍ້າແຕກໜໍ່ແໜງ, ອອກດອກ ແລະ ປົ່ງໃບ ລະດູນີ້ຍັງເອີ້ນວ່າ ລະດູບານໃໝ່ ຫຼື ລະດູໃບໄມ້ປົ່ງ. ໃນລະດູແລ້ງນີ້ຝົນບໍ່ຄ່ອຍຕົກ, ເຖິງຈະຕົກກໍ່ພຽງແຕ່ຝົນຫານ້ອຍ ແລະ ດົນໆ ຈຶ່ງຄ່ອຍຕົກເທື່ອໜຶ່ງ ຄືດັ່ງຊາວບູຮານໄດ້ສະຫຼຸບຄວາມອັນເປັນປົດຊະນິໄວ້ວ່າ : " ຝົນບໍ່ຂາດເດືອນສາມ ຝົນບໍ່ຮາມເດືອນສີ່ ເວັ້ນໄວ້ແຕ່ເດືອນຍີ່ເດືອນຈຽງ ". ແຕ່ເດືອນພຶດສະພາ ຫາເດືອນມິຖຸນາ ອາກາດຮ້ອນສູງຂຶ້ນເປັນລຳດັບ ເຊິ່ງເຮົາເອີ້ນວ່າລະດູຮ້ອນ ຫຼື ຍາມຮ້ອນນັ້ນເອງ.

ສ່ວນລະດູຝົນ ຈະເລີ່ມແຕ່ເດືອນ ມິຖຸນາ ໄປຈົນເຖິງເດືອນ ກັນຍາ ໃນໄລຍະນີ້ຕອນກາງເວັນ ອາກາດຮ້ອນອົບເອົ້າຖ້າມື້ໃດຝົນບໍ່ຕົກ ກາງຄືນກໍ່ມີອາກາດຮ້ອນເອົ້າຄືກັນ. ບາງປີຍາມຝົນມັກມີລົມພາຍຸໃນໄລຍະຕົ້ນ ຫຼື ໄລຍະກາງຂອງລະດູຝົນ, ເມື່ອມີລົມພາຍຸພັດມາ ມັກຈະມີຝົນຕົກໜັກ ແລະ ແກ່ຍາວ. ຕາມທຳມະດາຢູ່ປະເທດເຮົາ ມີຝົນຕົກຫຼາຍແຕ່ບໍ່ຄ່ອຍສະໝ່ຳສະເໝີກັນໝົດທຸກບ່ອນ ເຊັ່ນ ຢູ່ເຂດພູດອຍ ຝົນມັກຕົກຫຼາຍ

ກວ່າຢູ່ເຂດທົ່ງພຽງ. ໃນປັດຈຸບັນນີ້ສະພາບດິນຟ້າອາກາດ ມີການປ່ຽນແປງຍ້ອນສະພາບແວດລ້ອມຖືກທຳລາຍຫຼາຍ ຈຶ່ງເຮັດໃຫ້ການຫັນປ່ຽນຂອງລະດູການບໍ່ສະແດງອອກແຈ້ງຄືໃນເມື່ອກ່ອນ. ດຽວນີ້ຝົນບໍ່ຕົກສະໝ່ຳສະເໝີຄື ບາງເທື່ອຝົນຕົກຫຼາຍໃນຕອນຫົວປີ ແລ້ວກໍ່ແຫ້ງແລ້ງໃນຕອນກາງປີຫາທ້າຍປີ ອັນເປັນຜົນບໍ່ດີຕໍ່ລະດູການຜະລິດຜົນ ຂອງຊາວກະສິກອນ.

ລະດູແລ້ງ ແລະ ລະດູຝົນ ເປັນລະດູການທີ່ທຳມະຊາດໝູນວຽນ ແລະ ເຄື່ອນໄຫວອ້ອມຕົວຂອງມັນເອງ ໂດຍໄປພ້ອມໆກັນກັບການເຄື່ອນໄຫວຂອງສະພາບແວດລ້ອມຕ່າງໆ ຂອງທຳມະຊາດ.ຖ້າຢາກໃຫ້ທຳມະຊາດໝູນວຽນໄປຕາມກົດເກນອັນປົກກະຕິຂອງມັນຄືເກົ່າ, ຄົນທັງຫຼາຍຈະຕ້ອງພ້ອມໃຈກັນອະນຸລັກຄວາມອຸດົມສົມບູນ ຂອງທຳມະຊາດເອົາໄວ້ແຕ່ດຽວນີ້ເປັນຕົ້ນໄປ.

**ອະທິບາຍສັບ :**

ບໍ່ຂາມ : ບໍ່ຂາດ, ບໍ່ຂ້າມ, ບໍ່ເວັ້ນ.

ໝູນວຽນ : ເຄື່ອນຍ້າຍ.

ກົດເກນ : ການເປັນໄປທີ່ບໍ່ປ່ຽນແປງໄດ້.

ອະນຸລັກ : ຮັກສາ.

**ຄຳຖາມ :**

1. ໃນປະເທດເຮົາປີໜຶ່ງໆ ມີຈັກລະດູ ຄືລະດູໃດແດ່ ? ແຕ່ລະລະດູມີຄວາມແຕກຕ່າງກັນແນວໃດ ?
2. ເປັນຫຍັງທຳມະຊາດ ຈຶ່ງມີການປ່ຽນແປງຜິດປົກກະຕິ ?
3. ຢາກໃຫ້ລະດູການຕ່າງໆ ໝູນວຽນໄປຢ່າງຖືກຕ້ອງ ຈະຕ້ອງເຮັດແນວໃດ ?.

# ບົດທີ 54



## ປ່າດົງ

ດິນແດນດ້າວ ລາວເຮົາທັງປະເທດ
ເປັນເຂດດົງປ່າໄມ້ ໄພກວ້າງໜ່ວງໜາ
ແລດູພູຜາຂັ້ນ ເຂົາຊັນຊ້ອງຊໍ່
ດົງດອນດິນບໍ່ໃກ້ ຝູງໄມ້ມາກມູນ
ປຸນດັ່ງຄົນແປງສ້າງ ອຸດທະຍານສວນອາດ
ໂດຍລະດາດໄມ້ ລຳຕົ້ວໄຂ່ວຂືນ.
ມີໝູ່ຍູງຍາງໄມ້ ແດງດູ່ແຄນຂາວ
ບົກບາງຈິກຮັງເປືອຍ ຊາດກຸງພຸງຊໍ້

ແປກມີໄມ້ກໍຮົ້ວ
ມັນປາຫົວຈອງຈັນ
ໄມ້ໄຜ່ໄລ່ລໍເຣັຍ
ຕະຫຼອດໝົດໝູ່ໄມ້
ປ່າດົງພົງໄພກວ້າງ
ໄມ້ຫາກເປັນສິນຊັບ
ຄົນເຮົາອົນມາສ້າງ
ສາລະພັດຂອງເຄື່ອງໃຊ້
ຫຼືຟືນໄມ້
ຫຼວງຫຼາຍເຫຼືອປະໂຫຍດໄມ້
ດົງຍັງເປັນຂອງຂັ້ນ
ໃຫ້ກິນດີອຸ່ນເສື້ອຍ
ຮາກໄມ້ທຳການຫ້າມ
ເປັນເຂື່ອນກັ້ນ
ຄາວເມື່ອເຮົາຮູ້ແລ້ວ
ຈຶ່ງພາກັນຫວງແຫນ
ຢ່າໄດ້ຈັງໄຮຕີ້
ຫາປະໂຫຍດບໍ່ໄດ້
ການຖາກຖາງປ່າໄມ້
ກໍ່ໃຫ້ຫອນເຫັນຄັກ
ພາກັນຫາຫາງເອັ້ນ
ຍ້ອນວ່າຄຸນປ່າໄມ້
ແຕ້ຂ່ານົມພາ
ແຜ່ເຕັມໄພກວ້າງ
ບົງຊາງພາງຊອດ
ມີສ້ຽງຂູ່ແນວ.
ເປັນຂ່ອງຫາກິນ
ຄ່າຄຸນຫຼາຍລົ້ນ
ເຮືອນຊານບ້ານຊ່ອງ
ໄຖລໍ້ລົດກວຽນ
ດັງໄພບໍ່ຂາດເມື່ອ
ເຮົາໃຊ້ຢູ່ຊູ່ວັນ.
ນ້ຳຝົນຕົນໄວ້ກັບທີ່
ຜົນໄມ້ຈຶ່ງງອກງາມ
ດິນເພພັງເຈື່ອນ
ກັບນ້ຳເສາະພູ
ຄຸນປະໂຫຍດໄພຂວາງ
ຊອຍກັນຮັກສາໄວ້.
ຈູດເລົາເຜົາປ່າ
ຝູງໄມ້ຈະມອດວາຍ
ສາງໄຮ່ກະທຳສວນ
ບ່ອນຄ່ອນທຳສ້າງ
ທຳລາຍດອນປ່າ
ຫຼາຍລົ້ນດັ່ງຈາ ແທ້ແລ້ວ.

## ບົດທີ 55

# ເມືອຢາມບ້ານ

ທ້າວ ຄຳສີ ຫ່າງຈາກບ້ານເກີດ ໄປເປັນທະຫານປ້ອງກັນຊາດໄດ້ຫຼາຍປີແລ້ວ, ມື້ນີ້ຈຶ່ງໄດ້ມີໂອກາດເມືອຢາມບ້ານ.

ໃນຂະນະທີ່ພວມເດີນທາງ ທ້າວ ຄຳສີ ຮູ້ສຶກຕື່ນເຕັ້ນໃຈຫຼາຍເພາະວ່າບໍ່ດົນລາວກໍ່ຈະໄດ້ໄປຮອດບ້ານເກີດຂອງຕົນ, ຈະໄດ້ເຫັນພາບທຳມະຊາດບ້ານນາທີ່ແກ່ວນເຄີຍ, ຈະໄດ້ພົບພໍ້ໝູ່ເພື່ອນ ອ້າຍນ້ອງ ພໍ່ແມ່ກໍ່ຄືພີ່ປ້ານ້າອາອັນແສນຮັກຂອງຕົນ. ຄຳສີ ທັງຍ່າງທັງຊົມທັດສະນີຍະພາບອ້ອມຂ້າງດ້ວຍຄວາມຕື່ນຕາ ແລະ ແປກໃຈ, ຮອດຫ້ວຍນ້ຳລາວກໍ່ລະເມີໄປກັບຄວາມຄິດຫາອະດີດເມື່ອຍາມຍັງນ້ອຍ ເຄີຍເອົາຄວາຍລົງຟູມນ້ຳ ໃສ່ເບັດໃສ່ມອງ ຕາມຫ້ວຍນ້ຳສາຍນີ້.

ພໍຮອດທາງເຂົ້າບ້ານ ລາວກໍ່ຍັງຈື່ດີຢູ່ ເພາະຍັງແມ່ນທາງເສັ້ນເກົ່ານັ້ນແລ້ວ ຕ່າງແຕ່ວ່າເພີ່ນຖາງໃຫ້ກ້ຽງ ແລະຂະຫຍາຍອອກໃຫ້ມັນກວ້າງກວ່າເກົ່າ. ຂ້າງຊ້າຍຂອງເສັ້ນທາງແມ່ນໜອງໝາກເກືອທີ່ ຄຳສີ ເຄີຍຕຶກເບັດກັບໝູ່, ແຕ່ດຽວນີ້ ໄດ້ກາຍເປັນອ່າງເກັບນ້ຳ ເຊິ່ງເປັດພວມລອຍຫຼິ້ນເປັນຝູງໆ. ປ່າເລົ່າເຊິ່ງເມື່ອກ່ອນເປັນບ່ອນລ້ຽງງົວຄວາຍຫາກິນຫຍ້າ ດຽວນີ້ໄດ້ກາຍເປັນສວນອ້ອຍ ແລະ ທົ່ງນາຈົນໄປຕິດຈອດກັບທົ່ງນາທີ່ມີເນື້ອທີ່ແຄບໃນເມື່ອກ່ອນ ກາຍເປັນທົ່ງນາທີ່ກວ້າງຂວາງຈົນສຸດຫູ່ສຸດຕາ ເບິ່ງໄຮ່ນາແຕ່ລະໄຮ່ມີຕົ້ນເຂົ້າຂຽວງາມໜ້າອອນຊອນ.

ແນມແຕ່ໄກໆ ຄຳສີ ຫຼຽວເຫັນຫຼັງຄາເຮືອນ ທີ່ມຸງດ້ວຍແປ້ນຫຼັງໜຶ່ງນັ້ນແມ່ນຫຼັງຄາໂຮງຮຽນທີ່ລາວເຄີຍຮຽນ, ແຄມໂຮງຮຽນມີຕົ້ນຂາມ

ໃຫຍ່, ຕົ້ນລຳໄຍ ແລະ ຕົ້ນອື່ນໆ ເຊິ່ງລາວເຄີຍຈຸ້ນຮົ່ມໃນຍາມແດດຮ້ອນ. ພໍຍ່າງເຂົ້າຮອດແຄມບ້ານ ລາວກໍ່ຮູ້ສຶກແປກປະຫຼາດເພາະແຕ່ກ່ອນບ້ານຂອງລາວມີແຕ່ເຮືອນນ້ອຍໆ ມຸງຫຍ້າ ຝາໄມ້ຮ້ຽ ແຕ່ດຽວນີ້ມີເຮືອນຫຼາຍຫຼັງເພິ່ນປຸກໃໝ່ຕັ້ງເປັນລະບຽບ, ມຸງດ້ວຍສັງກະສີ, ແອ້ມແປ້ນ ແລະ ຍົກພື້ນສູງຂື້ນຈຶ່ງຫຼຽວເຫັນວ່າ ກ້ອງຕະລ່າງເຮືອນໃດກໍ່ມີຄວາມສະອາດ, ຄອກສັດເພິ່ນກໍ່ເຮັດຢູ່ແຄມບ້ານພຸ້ນ ຈຶ່ງບໍ່ເຫັນຂີ້ສັດກອງເຕັມກາງບ້ານຄືໃນເມື່ອກ່ອນອີກ. ເຮືອນຂອງ ຄຳສີ ຕັ້ງຢູ່ບ່ອນເກົ່າແຕ່ຫາກແມ່ນເຮືອນປຸກໃໝ່.

ເມື່ອ ຄຳສີ ກ້າວຂື້ນຂັ້ນໄດເຮືອນ ພໍ່ແມ່, ອ້າຍເອື້ອຍນ້ອງກໍ່ປຸ້ມກັນມາຕ້ອນ ຕ່າງກໍ່ດີອົກດີໃຈເມື່ອເຫັນລາວຕຸ້ຍພີດີງາມ ແລະ ເປັນຊາຍໜຸ່ມທີ່ມີກຳລັງເຫື່ອແຮງເຂັ້ມແຂງເຕັມຕົວຜູ້ໜຶ່ງ. ຍາດພີ່ນ້ອງເຮືອນໃຕ້ເຮືອນເໜືອກໍ່ພາກັນຮ້ອງຖາມສະບາຍແຊວໆ ໃຜໆກໍ່ຫຼັ່ງກັນມາຢ້ຽມຢາມຖາມຂ່າວລາວ. ແລງມື້ນັ້ນ ຄຳສີ ໄດ້ນັ່ງຮ່ວມພາເຂົ້າກັບຄອບຄົວ ແລະ ພີ່ນ້ອງດ້ວຍຄວາມອົບອຸ່ນທີ່ສຸດ.

**<u>ອະທິບາຍສັບ</u> :**

ທັດສະນີຍະພາບ : ພາບທີ່ໜ້າຊົມ.

ມະເມີ : ຄຶດເພີນໄປ.

**<u>ຄຳຖາມ</u> :**

1. ທ້າວ ຄຳສີ ຮູ້ສຶກແນວໃດໃນຂະນະທີ່ພວມເດີນທາງເມືອຢາມບ້ານ ?
2. ເມື່ອຮອດເຮືອນແລ້ວ ພໍ່ແມ່ແລະຊາວບ້ານໄດ້ມາຢ້ຽມຢາມຖາມຂ່າວແນວໃດ ?.

<u>ບົດທີ 56</u>

# ທ້າວ ຄຳໄສ ໃຈຊື່

ຢູ່ໂຮງຮຽນປະຖົມບ້ານພຽງດີ, ການມ້ຽນມັດປັດກວາດ ແລະ ອັດປະຕູຫ້ອງຮຽນ ພາຍຫຼັງເລີກຮຽນແມ່ນໜ້າທີ່ ຂອງນັກຮຽນທຸກໆ ຄົນເຊິ່ງເຂົາເຈົ້າປ່ຽນຜຽນກັນເຮັດເປັນປົກກະຕິ. ມື້ນັ້ນຢູ່ຫ້ອງ ປ. 3 ຖືກຜຽນຂອງທ້າວ ຄຳໄສ ເປັນຜູ້ເຮັດອະນາໄມ ແລະຮັກສາຄວາມເປັນລະບຽບຮຽບຮ້ອຍຂອງຫ້ອງຮຽນ ກ່ອນຈະເລີກເມືອເຮືອນ. ຫຼັງຈາກທີ່ນາຍຄູ ແລະ ໝູ່ເພື່ອນອອກຈາກຫ້ອງຮຽນໝົດແລ້ວ ຄຳໄສ ກໍ່ຟ້າວເຮັດໜ້າທີ່ຂອງຕົນຈົນສຳເລັດ. ໃນຂະນະທີ່ ຄຳໄສ ຈະຍ່າງເມືອເຮືອນນັ້ນລາວເຫຼືອດຕາເຫັນກະເປົານ້ອຍສີດຳໜ່ວຍໜຶ່ງ ຕົກຢູ່ລະບຽງຫ້ອງຮຽນຂອງຫ້ອງ ປ.1 ລາວກໍ່ຟ້າວຈັບກະເປົານັ້ນຂຶ້ນມາໄຂເບິ່ງມີເງິນຈຳນວນສອງພັນສາມຮ້ອຍກີບ ແຕ່ບໍ່ຮູ້ວ່າແມ່ນຂອງໃຜ. ຄຳໄສ ງວາກຊ້າຍງວາກຂວາບໍ່ເຫັນໃຜເລີຍ, ລາວຢືນຊື່ງຢູ່ຄາວໜຶ່ງ ຈຶ່ງຊວາດຄິດເຫັນຄຳຕັກເຕືອນຂອງຄູທີ່ວ່າ : " ຄວາມສັດຊື່ບໍລິສຸດ ແມ່ນຄຸນສົມບັດທີ່ດີຂອງນັກຮຽນທຸກຄົນ, ການເຊື່ອງອຳເອົາຂອງທີ່ຕົກເຮ່ຍນັ້ນ ບໍ່ຕ່າງຫຍັງກັບລັກລອບເອົາຂອງຄົນອື່ນມາເປັນຂອງຕົນເອງນັ້ນແຫຼະ ", ຄຳໄສ ຈຶ່ງຄິດອອກວ່າ : ຖ້າວ່າເຮົາເອງເປັນເຈົ້າຂອງສິ່ງຂອງຕົກເຮ່ຍແນວນີ້ເດ ຈະຄິດແນວໃດ ແມ່ນແຕ່ວ່າສໍກົດເສັ້ນໜຶ່ງຕົກເຮ່ຍ ເຮົາກໍ່ຍັງຄິດເສຍດາຍບໍ່ແມ່ນຂອງງ່າຍ, ຖ້າໃຜຜູ້ໜຶ່ງຫາກເກັບສໍດຳກົດເສັ້ນນັ້ນມາສົ່ງຄືນໃຫ້ເຮົາກໍ່ມີຄວາມດີໃຈ ແລະ ນັບຖືຄວາມບໍລິສຸດໃຈຂອງຄົນຜູ້ນັ້ນ. ເມື່ອຄິດ

ແນວນັ້ນ ຄຳໄສ ກໍ່ຟ້າວເອົາກະເປົານ້ອຍສີດຳນັ້ນຍັດໃສ່ຖົງປຶ້ມຂອງຕົນ ແລະ ຕັ້ງໃຈວ່າມື້ອື່ນເຊົ້ານີ້ຈະເອົາສິ່ງຂອງທີ່ຕົນເກັບໄດ້ນີ້ໄປແຈ້ງແລະ ມອບໃຫ້ນາຍຄູເພື່ອຊອກຫາເຈົ້າຂອງກະເປົານ້ອຍໜ່ວຍນີ້.

ຮອດໂມງເຂົ້າຮຽນຕອນເຊົ້າມື້ຕໍ່ມາ ຄຳໄສ ກໍ່ໄປຮອດໂຮງຮຽນ ແຕ່ເຊົ້າ, ພໍຄູປະຈຳຫ້ອງມາຮອດ ລາວກໍ່ຟ້າວແຈ້ງ ແລະ ມອບກະເປົານ້ອຍສີດຳໃຫ້ນາຍຄູໂລດ. ນັກຮຽນໃນຫ້ອງ ປ.3 ທຸກຄົນໃຜໆ ກໍ່ຈ້ອງມອງສາຍຕາເບິ່ງ ຄຳໄສ ແລະ ສະແດງຄວາມຊົມເຊີຍຕໍ່ຄວາມຊື່ສັດບໍລິສຸດຂອງລາວ. ນາຍຄູກໍ່ຈົກກະເປົາໜ່ວຍນັ້ນຍົກຂຶ້ນ ພ້ອມທັງຖາມທຸກຄົນວ່າ: " ກະເປົານ້ອຍໜ່ວຍນີ້ແມ່ນ ຂອງຜູ້ໃດ ຜູ້ໜຶ່ງໃນຫ້ອງເຮົານີ້ບໍ່ ? " ທຸກຄົນຕອບວ່າ : " ບໍ່ " . ຫຼັງຈາກນັ້ນນາຍຄູກໍ່ນຳເອົາກະເປົານ້ອຍນັ້ນໄປມອບໃຫ້ຜູ້ອຳນວຍການ ໂຮງຮຽນ ເພື່ອໃຫ້ເພິ່ນປະກາດຫາຜູ້ເປັນເຈົ້າຂອງມັນ. ຕໍ່ມາກໍ່ຮູ້ວ່າເຈົ້າຂອງກະເປົານ້ອຍສີດຳໜ່ວຍນັ້ນ ແມ່ນຂອງນາຍຄູປະຈຳຫ້ອງ ປ.1. ຜູ້ອຳນວຍການ ແລະ ນາຍຄູຜູ້ເປັນເຈົ້າຂອງກະເປົາເງິນກໍ່ພາກັນມາຂອບໃຈ ແລະຍ້ອງຍໍທ້າວ ຄຳໄສ ຕໍ່ໜ້າໝູ່ເພື່ອນໃນຫ້ອງທຸກຄົນວ່າ : " ຄຳໄສ ເປັນແບບຢ່າງທີ່ດີແກ່ນັກຮຽນທຸກໆ ຄົນ ແລະທຸກຄົນຈົ່ງຮ່ຳຮຽນເອົາແບບຢ່າງອັນດີນີ້ ເປັນບົດຮຽນໃຫ້ແກ່ການເຝິກຝົນແນວຄິດຄຸນສົມບັດ ຈຶ່ງເປັນນັກຮຽນຜູ້ທີ່ມີນ້ຳໃຈຊື່ສັດບໍລິສຸດ " ຄຳໄສ ກໍ່ມີຄວາມພາກພູມໃຈຕໍ່ສິ່ງທີ່ຕົນເອງໄດ້ປະພຶດດີຕໍ່ສັງຄົມ ແລະ ກໍ່ຈະປະຕິບັດແບບແຜນອັນດີນີ້ຕະຫຼອດໄປ.

**ອະທິບາຍສັບ :**

ບໍລິສຸດ : ປອດໃສ, ຂາວສະອາດ.

ຈ້ອງມອງ : ສຸມແສງຕາເບິ່ງ.

ປະກາດ : ແຈ້ງຂ່າວໃຫ້ຮູ້.

ປະພຶດ : ເຮັດ, ປະຕິບັດ.

**ຄຳຖາມ :**

1. ທ້າວ ຄຳໄສ ໄດ້ຄິດ ແລະ ເຮັດແນວໃດໃນເມື່ອເກັບຖົງເງິນຕົກເຮ່ຍ ?
2. ນາຍຄູຍ້ອງຍໍສັນລະເສີນ ຄຳໄສ ວ່າແນວໃດແດ່ ?
3. ພວກເຮົາຄວນຮຽນເອົາບົດຮຽນອັນດີຂອງ ຄຳໄສ ແນວໃດ ?

## ບົດທີ 57

# ຊ່ວຍກັນມອດໄຟໄໝ້ປ່າ

ໃນທ້ອງເດືອນ ເມສາ ອາກາດຮ້ອນອົບເອົ້າທັງເວັນທັງຄືນ ພື້ນທີ່ຕ່າງໆ ກໍ່ເຕັມແຕ່ໃບໄມ້ແຫ້ງ ແລະ ໄມ້ຕາຍໄຂ່ວຂີນກັນຢູ່. ຕອນບ່າຍຂອງມື້ໜຶ່ງ ທ້າວ ຄຳສີດ ເຂົ້າປ່າເພື່ອຊອກຕັດຫວາຍມາໄວ້ໃຊ້, ຫຼັງຈາກຊອກຫວາຍໄດ້ແລ້ວ ລາວຈະກັບຄືນມາເຮືອນ, ລາວໄດ້ແວ່ເຊົາເອົາແຮງຢູ່ກ້ອງຮົ່ມໄມ້ຕົ້ນໜຶ່ງ ແລ້ວຈົກເອົາຢາມາພັນ. ລາວນັ່ງສູບຢາຈົນສຸດກອກແລ້ວກໍ່ແກວ່ງຖິ້ມຢ່າງບໍ່ລະມັດລະວັງ. ໃນຂະນະທີ່ລາວອອກເດີນທາງກັບຄືນ, ໄຟນ້ອຍໆ ທີ່ຍັງຕິດຢູ່ປາຍກອກຢາກິດຂອງລາວນັ້ນເມື່ອຖືກລົມພັດມັນກໍ່ຄ່ອຍໆໄໝ້ຂື້ນ ຕິດໃສ່ໃບໄມ້ແຫ້ງ ແລ້ວໄໝ້ລາມເຂົ້າມາທາງທິດບ້ານ. ແປວໄຟໄໝ້ສູງຂື້ນທຸກຂະນະ ບໍ່ວ່າໄມ້ແຫ້ງແລະໄມ້ເປັນກໍ່ໄໝ້ໄປຕາມໆ ກັນ ພາໃຫ້ມີສຽງແຕກເປືອງນັບບໍ່ຂາດສາຍ. ໝັດໄຟແດງຮຸນໆ ປິວຂື້ນແລ້ວມາຕົກໃສ່ບ້ານ; ໄຟລຸກແຮງເທົ່າໃດ ລົມກໍ່ພັດມາຫາບ້ານແຮງເທົ່ານັ້ນ. ຊາວບ້ານທີ່ພວມແຕ່ງກິນຕອນຄ່ຳມື້ນັ້ນເມື່ອເຫັນເຫດການອັນບໍ່ດີຕ່າງກໍ່ພາກັນຕື່ນຕົກໃຈ ບາງຄອບຄົວກໍ່ມ້ຽນມັດເຄື່ອງຂອງ ບາງຄົນກໍ່ຮ້ອງໂວຍວາຍຂື້ນຢ່າງສັບສົນ.

ເມື່ອເປັນແນວນັ້ນ ລຸງ ບົວເກດ ຜູ້ເປັນນາຍບ້ານກໍ່ຟ້າວປ່າວປະກາດໃຫ້ຊາວໜຸ່ມຊາຍສະກັນ ຈັດຕັ້ງເປັນສາມຈຸໃຫຍ່ຄື : ຈຸໜຶ່ງໃຫ້ໄປຖາງປ່າລຽບບ້ານ ແລ້ວກວາດຂີ້ເຫຍື້ອອອກໃຫ້ໄກ, ຈຸໜຶ່ງໃຫ້ເອົານ້ຳໄປຫົດໃສ່ຕາມຂອບເຂດທີ່ຖາງໄວ້ ເພື່ອຕ້ານໄຟທີ່ພວມລາມມາແລະຈຸໜຶ່ງອີກເປັນຜູ້ກຽມພ້ອມປົກປັກຮັກສາເຮືອນຊານ ແຕ່ລະຫຼັງ ພ້ອມທັງມ້ຽນມັດ

ເຄື່ອງເຮືອນຂອງໃຜລາວ. ຈຸໃດກໍ່ເອົາໃຈໃສ່ເຮັດໜ້າທີ່ຂອງຕົນຈົນສຳເລັດເປັນຕົ້ນແມ່ນ ຈຸທີ່ເຂົ້າປະຈັນບານກັບໄຟທີ່ພວມໄໝ້ລາມມານັ້ນເບິ່ງຜູ້ໃດກໍ່ຈົນໜ້າແດ້ນແກ້ມໄໝ້ຍ້ອນບຸປ່າຜ່າຄວັນ ແລະ ແປວໄຟອັນຮ້ອນແສບຢ່າງບໍ່ຫວາດຫວັ່ນ. ບໍ່ດົນດາວແປວໄຟໃຫຍ່ທີ່ໄໝ້ລາມມານັ້ນກໍ່ຄ່ອຍໆດັບມອດໄປ.

ຫຼັງຈາກຊາວບ້ານຊ່ວຍກັນມອດໄຟແລ້ວ ລຸງ ບົວເກດ ຈຶ່ງເວົ້າຂຶ້ນວ່າ: ນີ້ແຫຼະພະລັງແຫ່ງຄວາມສາມັກຄີເປັນຈິດໜຶ່ງໃຈດຽວກັນແລະກໍ່ເປັນບົດຮຽນອັນໃຫຍ່ສຳລັບທຸກຄົນ ທີ່ບໍ່ລະມັດລະວັງຕໍ່ອັກຄີໄພທີ່ອາດຈະເກີດຂຶ້ນໃນທຸກເວລາ ຫາກພວກເຮົາໝິ່ນປະໝາດມັນ. ຖ້າພວກເຮົາບໍ່ຊ່ວຍກັນ ບ້ານເຮົາກໍ່ຈະກາຍເປັນເທົ່າຖ່ານ, ປ່າໄມ້ທີ່ເຄີຍໃຊ້ເປັນປະໂຫຍດປະຈຳວັນກໍ່ຈະກ້ຽງໄປ.

<u>**ອະທິບາຍສັບ**</u> :

ສົນລະວົນ : ວຸ່ນວາຍ, ບໍ່ສະຫງົບ.

ປະຈັນບານ : ຕໍ່ສູ້ໜ້າເຊິ່ງໜ້າ.

ອັກຄີ : ໄຟ.

<u>**ຄຳຖາມ**</u> :

1. ຍ້ອນຫຍັງ ຈຶ່ງເກີດມີໄຟໄໝ້ປ່າຄັ້ງນີ້ ?
2. ເມື່ອເກີດມີເຫດການໄຟໄໝ້ປ່າ ແລ້ວຊາວບ້ານພາກັນເຮັດແນວໃດ ?
3. ຄວາມອັນຕະລາຍຂອງໄຟໄໝ້ປ່າ ມີຫຍັງແດ່ຈະເກີດຂຶ້ນ ?.

## ບົດທີ 58



# ຜູ້ສືບມໍລະດົກ

| | |
|---|---|
| ມໍລະດົກສ່ວນນີ້ | ມີຄ່າເພິງແພງ |
| ຢ່າໃຫ້ແຫງເຫີຍຍຸບ | ເສື່ອມເສຍສູນສິ້ນ |
| ມີທັງດິນດອນຫຍ້າ | ຜືງພະນາດ້າວດ່ານ |
| ເປັນຖິ່ນຖານເອກອ້າງ | ວາງໄວ້ຊື່ວ່າລາວ. |
| ເຈົ້າຜູ້ຍັງໜຸ່ມນ້ອຍ | ຄອຍສືບແທນຕະກຸນ |
| ຢ່າໃຫ້ສູນເສຍສັກ | ຊາດລາວແດນນີ້ |
| ຮັບສືບດິນນ້ຳ | ຊັບພະຍາກອນທຳມະຊາດ |
| ນະທີປ່າແມ່ນ້ຳຮອບດ້ານ | ຈົ່ງຢັນຄ້ຳຢ່າໄລ.. |

ຄົນເກີດກ່ອນມອບໄວ້ ຟັງຝາກວາງໝາຍ
ໃຫ້ສໍ່າອະນຸຊົນຊົມ ຜູ້ເກີດລຸນພາຍທ້າຍ
ປະສານໃຈໂຊມຊຸ້ອານ ມໍລະດົກທຸກພາກສ່ວນ
ຄວນແກ່ການສືບສ້າງ ປົກປ້ອງລໍ້າຖະໜອມ.
ຍ້ອນວ່າຫອມຫໍ່ນ້ອຍ ຜູ້ປ່ອຍລ່ອຍໂສພາ
ພໍ່ແມ່ລຸງອາວອາ ຈຶ່ງມອບເວນວາງໄວ້
ຢ່າໃຫ້ເສຍແຮງຕັ້ງ ມະໂນປອງປຸນຄ່ຳ
ມໍລະດົກຍົກໃຫ້ ວາງໄວ້ໃສ່ປີ.
ຫຼານຢ່າໄດ້ດ່ອນຄີ້ ຈົ່ງສັດຊື່ຈິງໃຈ
ບາດໃຫຍ່ສູງຢ່າລືມມູນ ນຶ່ງມໍລະດົກນີ້
ຢາກເປັນຄົນດີສ້າງ ມໍລະດົກເສີມສົ່ງ
ຈົ່ງຮໍ່າຮຽນຢ່າກຽດຄ້ານ ຫຼານຫຼ້າຈຶ່ງຮຸ່ງເຮືອງ ຊີ່ປີ.

**ອະທິບາຍສັບ** :

ມໍລະດົກ : ມູນມັງ, ສິ່ງທີ່ເກົ່າແກ່ ແລະ ມີຄ່າ.
ຜົງພະບາ : ພູຜາປ່າໄມ້.
ໂສພາ : ງາມ, ສວຍງາມ.
ມະໂນ : ໃຈ.
ມູນ : ມູນມັງ.

<u>ບົດທີ 59</u>

# ຈຳປາສັກແດນງາມ

ຈຳປາສັກເປັນຊື່ແຂວງໜຶ່ງ ຕັ້ງຢູ່ພາກໃຕ້ຂອງລາວ ເຊິ່ງເປັນດິນແດນທີ່ມີຄວາມອຸດົມສົມບູນດ້ວຍເຂົ້າປາບານ້ຳ ແລະ ພືດພັນພົນລະປູກນາໆຊະນິດ, ມີປະຊາກອນອາໄສຢູ່ ແລະ ທຳມາຫາກິນຢ່າງໜາແໜ້ນ, ແຂວງຈຳປາສັກ ປະກອບດ້ວຍຫຼາຍຕົວເມືອງ ແລະ ມີວັດຖຸບູຮານທີ່ເກົ່າແກ່ສວຍງາມໜ້າມະຫັດສະຈັນຢູ່ຫຼາຍຢ່າງ.

ເມື່ອເຮົາຫາກໄດ້ຂີ່ເຮືອບິນ ບິນຢູ່ເທິງດິນແດນ ແຂວງຈຳປາສັກ ແລະ ມອງແຕ່ເທິງລົງລຸ່ມ ຈະໄດ້ເຫັນທົ່ງພຽງທີ່ກວ້າງໃຫຍ່ ມີແມ່ນ້ຳຂອງຜ່ານທາງກາງ ເຊິ່ງແບ່ງແຂວງຈຳປາສັກ ອອກເປັນສອງຟາກ, ຈະເຫັນສາຍພູບາຈຽງ ແລະ ພູມະໂລງ ທີ່ໃຫຍ່ສູງອ້ອມກອດເອົາເມືອງປາກເຊ ໄວ້ດ້ວຍປ່າໄມ້ສີຂຽວຕະຫຼອດປີ. ສິ່ງທີ່ຂຶ້ນຊື່ລືຊາກວ່າໝູ່ຢູ່ແຂວງຈຳປາສັກ ມີວັດພູ ແລະ ຄອນພະເພັງ. ວັດພູ ຫຼື ເອີ້ນວ່າພາສາດຫີນ ວັດພູຕັ້ງຢູ່ຕອນດິນຝັ່ງຂວາແມ່ນ້ຳຂອງ ຢູ່ຫ່າງຈາກເມືອງຈຳປາສັກ ໄປທາງທິດຕາເວັນຕົກສ່ຽງໃຕ້ ປະມານຫົກສິບກິໂລແມັດ ເຊິ່ງຖືກສ້າງຂຶ້ນສະຕະວັດທີເຈັດ ພຸ້ນ, ມາເຖິງປັດຈຸບັນ ວັດພູຍັງເປັນວັດຖຸບູຮານອັນເກົ່າແກ່ແລະສັກກາລະບູຊາ ຂອງປະຊາຊົນຈຳປາສັກ ກໍ່ຄືຊາວລາວທຸກຄົນ.

ແຜ່ນດິນຕອນໃຕ້ ຂອງແຂວງຈຳປາສັກ ມີຄອນພະເພັງ ( ຫຼີ່ຜີ ) ບ່ອນທີ່ມີນ້ຳຕົກຕາດສູງເຖິງ ສິບຫ້າແມັດ ຈົນເປັນແກ່ງໃຫຍ່ທີ່ມີຊື່ສຽງກວ່າໝູ່ໃນປະເທດລາວ ທັງເປັນເຂດທີ່ຕິດຈອດກັບປະເທດ ກຳປູເຈຍ. ແມ່ນ້ຳຂອງຍ່ານນີ້ ໄຫຼແຍກອອກເປັນຫຼາຍແງ່ອັນເຮັດໃຫ້ເກີດມີຫຼາຍໆດອນ ຈົນນັບບໍ່ໄດ້ ຈຶ່ງມີຄົນປະມານວ່າມີສີ່ພັນດອນ ແລະ ກໍ່ເລີຍເອີ້ນ



PS 476

ທ້ອງຖິ່ນແຖວນັ້ນວ່າ " ທ້ອງຖິ່ນສີ່ພັນດອນ ". ຕາມລຳແມ່ນ້ຳຂອງຍ່ານນີ້ເປັນຍ່ານທີ່ມີປູປານານ້ຳຫຼາຍໆ ຊະນິດ ຈົນປະຊາຊົນທີ່ອາໄສຢູ່ແຖບນີ້ນອກຈາກຍຶດຖືອາຊີບເຮັດນາ ແລະ ເຮັດສວນແລ້ວຍັງຖືເອົາການຫາປາເປັນອາຊີບເສີມ ເພື່ອຫາລາຍໄດ້ແກ່ຄອບຄົວນຳອີກ.

ຈຸດພິເສດອັນໜຶ່ງ ຂອງແຂວງຈຳປາສັກ ຍັງມີດິນແດນປາກຊ່ອງ ອັນລືຊື່ວ່າເປັນດິນດີ ເໝາະສົມແກ່ການພັດທະນາກະສິກຳ. ສະນັ້ນ ລັດຖະບານຈຶ່ງໄດ້ວາງນະໂຍບາຍພັດທະນາແຂວງຈຳປາສັກໃຫ້ກາຍເປັນເຂດທ່ອງທ່ຽວທີ່ສຳຄັນແຫ່ງໜຶ່ງຂອງປະເທດເຮົາ ແລະ ພັດທະນາການກະສິກຳເພື່ອຜະລິດເຂົ້າ ກໍ່ຄືພືດພັນທັນຍາຫານໃຫ້ກາຍເປັນສິນຄ້າຫຼາຍຂື້ນ. ອະນາຄົດຂ້າງໜ້າ ແຂວງຈຳປາສັກ ຈະກາຍເປັນຈຸດຜ່ານຂອງສາຍທາງຄົມມະນາຄົມກໍ່ຄືການຄ້າຂາຍລະຫວ່າງໄທ, ຫວຽດນາມແລະກຳປູເຈຍ ນຳອີກ.

**<u>ອະທິບາຍສັບ</u> :**

| | | |
|---|---|---|
| ປະຊາກອນ | : | ປະຊາຊົນ, ພົນລະເມືອງ. |
| ມະຫັດສະຈັນ | : | ງົດງາມ, ແປກປະຫຼາດ. |
| ສັກກາລະບູຊາ | : | ບ່ອນທີ່ໂຄລົບນັບຖື. |
| ຈຸດຜ່ານ | : | ບ່ອນຜ່ານໄປມາ. |

**<u>ຄຳຖາມ</u> :**

1. ແຂວງຈຳປາສັກ ຕັ້ງຢູ່ພາກໃດຂອງປະເທດ ແລະ ມີຄວາມອຸດົມສົມບູນແນວໃດ ?
2. ບ່ອນທ່ອງທ່ຽວທີ່ສຳຄັນ ຂອງແຂວງຈຳປາສັກມີບ່ອນໃດແດ່ ?
3. ການພັດທະນາແຂວງຈຳປາສັກ ມີຄວາມສຳຄັນແນວໃດ ຕໍ່ການພັດທະນາປະເທດເຮົາ ?.

<u>ບົດທີ 60</u>

# ອາຫານການກິນ

ອາຫານເຊົ້າ
ເປັນເຄື່ອງຊູຊີບໃຫ້
ມຸກອ້ວນພີດີກຽງ
ໄພພະຍາດຮ້າຍ

ຂອງກິນມີມາກລົ້ນ
ແລ້ວແຕ່ເຮົາສະແຫວງຫາ
ແຕ່ໃຫ້ຫວນເຫັນແຈ້ງ
ສິ່ງທີ່ມີມົນທິນ

ອັນວ່າສຸ[illegible] ເຫຼົ້າ
ກິນບໍ່ມີປະໂຫຍດແທ້
ພາໃຫ້ອາຍຸສັ້ນ
ຫາຄວາມສຸກບໍ່ໄດ້

ອັນໜຶ່ງການກິນໃຫ້
ຢ່າໄດ້ກິນອີ່ມລົ້ນ
ສ່ວນອາຫານນີ້
ກິນຫຼາຍທຳໂທດຊ້ຳ

ໃຫ້ກິນພໍດີດ້ານ
ສຸຂະພາບຈຶ່ງອ້ວນ
ໃຫ້ກິນຜັກ ແລະ ໝາກໄມ້
ມັນເປັນຂອງບຳລຸງກາຍ

ຂອງກິນເຮົາທຸກເບື້ອງ
ເຮົາໄດ້ໃຫຍ່ສູງ
ແຂງແຮງສາມາດ
ໜີເວັ້ນຫ່າງໄກ ເຈົ້າເອີຍ.
ຮ້ອຍຢ່າງພັນແນວ
ຊອກກິນພໍໄດ້
ໃນແຫ່ງການກິນ
ຢ່າຊູ່ເອົາມາໃກ້.
ມຶນເມົາຄືຝິ່ນ
ທຳຮ້າຍແກ່ຮ່າງກາຍ
ຕະນິ່ມພັນເຫຼືອງຫຼ່າ
ຄວນໃຫ້ຮີບຕອງ ແທ້ແລ້ວ.
ເອົາແຕ່ພໍພຽງອີ່ມ
ເຫຼືອລົ້ນເລີດປະມານ
ກິນພໍດີມີປະໂຫຍດ
ຜອມແຫ້ງຈ່ອຍໂຊ.
ພໍງາມສົມສ່ວນ
ດີໄດ້ດັ່ງປະສົງ
ມີໄຂ່ປະຈຳວັນ
ໃຫ້ຢູ່ຍືນຍາວໝັ້ນ.

ກ່ອນຈະກິນອາຫານນັ້ນ ມີລຳດັບຢູ່ຫຼາຍຢ່າງ
ຕ້ອງສະລ້າງໃຫ້ຮຽບຮ້ອຍ ເສຍແລ້ວຈຶ່ງຄ່ອຍກິນ
ຖ້າແມ່ນໝູ່ມັນຊີ້ນ ເນື້ອປາເປັດໄກ່
ໃຫ້ເປັນຂອງສິດສຸກ ສະອາດດີພໍໃຊ້.
ສ່ວນຜັກ ແລະ ໝາກໄມ້ ນົມໄຂ່ກໍ່ເໝືອນກັນ
ກິນເມື່ອມັນຍັງສົດ ສະອາດດີຈິງແທ້
ຄັນວ່າສົງໄສແລ້ວ ແນວໃດກໍ່ຕາມຊ່າງ
ໃຫ້ຮີບຄ້າງໃສ່ໝໍ້ ເອາະຕົ້ມໃສ່ໄຟ.
ເນື້ອສຸກດິບ ຫຼື ສຸກຮ້ອນ ກ້ອຍລາບພະລາສົງ
ສົ້ມແຈ່ວດອງຂອງເຄັມ ຈົ່ງລະວັງເບີ່ເຈົ້າ
ອາຫານຈຳພວກນີ້ ລົດດີນົວແຊບ
ແຕ່ວ່າຍາກແກ່ທ້ອງ ປອງໃຫ້ບ່ອຍໃຊ້.

**<u>ອະທິບາຍສັບ</u> :**

ມຸກ : ອ້ວນພີ.
ສະແຫວງຫາ : ຊອກຫາ.
ຫອນເຫັນ : ຄິດເຫັນ.
ມົນທິນ : ຄວາມອັບປະໂຫຍດເສົ້າໝອງ.
ອາຍຸສັ້ນ : ຕາຍໄວ.
ຕະນົມພັນ : ຮູບຮ່າງ.
ຮີ່ນຕອງ : ຄິດເບິ່ງ.
ພໍດີດ້ານ : ພໍຈົບພໍດີ.

# ປະເທດລາວ

PATHETLAO DAILY

ປີທີ IV ສະບັບທີ 10 114 ວັນສຸກ 22.4.2005

ສຳນັກງານເລກທີ 80 ຖະໜົນເສດຖາທິລາດ ນະຄອນຫຼວງວຽງຈັນ ສປປ.ລາວ Email: ptl@kpl.net.la Tel/Fax: 212447


## ໄພທຳມະຊາດແລະອຸປະຕິເຫດໃນແຫ່ງຕ່າງໆຂອງໂລກ

- ວັນທີ 19 ເມສາປີ້ໄດ້ເກີດແຜ່ນດິນໄຫວດ້ວຍຄວາມແຮງວັດແທກໄດ້ 5.7 ຣິກເຕີ, ແຕ່ເຖິງຢ່າງໃດກໍຕາມ ເຈົ້າໜ້າທີ່ຕຳຫຼວດຍີ່ປຸ່ນຍັງໄດ້ໃຫ້ຮູ້ວ່າ: ບໍ່ມີຜູ້ໃດໄດ້ຮັບບາດເຈັບ ແລະ ຫຼືຄວາມເສຍຫາຍໃດໆ ຈາກເຫດການແຜ່ນດິນໄຫວທີ່ເກີດຂຶ້ນໃນຄັ້ງນີ້.

ໃນຂະນະດຽວກັນ, ເມື່ອເວລາ 6 ໂມງ 11 ນາທີຕາມເວລາທ້ອງຖິ່ນ ຫຼືປະມານ 4 ໂມງ 11 ນາທີຕາມເວລາປະເທດລາວກໍໄດ້ເກີດມີເຫດການແຜ່ນດິນໄຫວຂຶ້ນອີກ ໃນເມືອງ. ເອນເມືອງຟູກູອູກະ ທີ່ຢູ່ຫ່າງຈາກນະຄອນຫຼວງໂຕກຽວໄປທາງທິດຕາເວັນຕົກສຽງໃຕ້ປະມານ 850 ກິໂລແມັດ ໂດຍມີຈຸດສູນກາງຢູ່ໃຕ້ທະເລເລິກເຖິງ 10 ແມັດ. ສຳນັກຂ່າວກຽວໂດຂອງຍີ່ປຸ່ນ ຍັງໄດ້ລາຍງານວ່າ ຍັງບໍ່ທັນມີລາຍງານວ່າມີຄົນບາດເຈັບ ທີ່ມີຄວາມໄວຫຼາຍຂອງຍີ່ປຸ່ນໄດ້ຖືກຢຸດເຊົາການໃຫ້ບໍລິການໃນບາງສ່ວນ ແລະ ບາງເສັ້ນທາງບໍ່ໄດ້ເປີດບໍລິການ ທີ່ເຊື່ອມຕໍ່ລະຫວ່າງເມືອງຟູກູໂອກະ ກັບນະຄອນໂອຊາກາທີ່ຢູ່ທາງທິດຕາເວັນຕົກຂອງຍີ່ປຸ່ນໃຫ້ເປັນການຊົ່ວຄາວ.

ສ່ວນທີ່ປະເທດອີຣານ: ໃນວັນທີ 20 ເມສາປີ້ ເຮືອບິນໂດຍສານລຳໜຶ່ງຂອງອີຣານທີ່ມີຜູ້ໂດຍສານຈຳນວນ 157 ຄົນ ໄດ້ເກີດໄຟລຸກໄໝ້ ໃນຂະນະທີ່ລົງຈອດທີ່ສະໜາມບິນນາງຸດ ເມຫາບັດໃນນະຄອນຫຼວງເຕເຮຣານຂອງອີຣານ ຄົນໄດ້ເສຍຊີວິດ ແລະ ຫຼາຍຄົນໄດ້ຮັບບາດເຈັບ. ລາຍງານອີກວ່າ: ເຮືອບິນລຳດັ່ງກ່າວເປັນເຮືອບິນໂບອິງ 707 ຂອງສາຍການບິນຊາຮາ ... ເດີນທາງມາຈາກເກາະ ... ໃນອ່າວເປີເຊຍ. ຂ່າວຈາກເຈົ້າໜ້າທີ່ ... ໃຫ້ຮູ້ວ່າ: ... ເປັນເດັກນ້ອຍຊຶ່ງ ... ໄດ້ໂດດອອກຈາກ ... ແມ່ນຜູ້ທີ່ເປີດປະຕູ ... ໄດ້ຮັບບາດເຈັບ ... ການຂົນແລະ ... ນຳສົ່ງໂຮງໝໍ. ສອບສວນ ... ສາຍການບິນດັ່ງກ່າວກໍໄດ້ອອກມາຊີ້ແຈງວ່າ: ເຮືອບິນລຳດັ່ງກ່າວໄດ້ມີການ ... ແລະ ... ໃນຈຳນວນຜູ້ໂດຍສານ ... ມີພະນັກງານປະຈຳເຮືອບິນຈຳນວນ 16 ຄົນ.

## ລັດຖະມົນຕີຕ່າງປະເທດ ສ.ອາເມລິກາ ປົ່ງມຍາມ ຣັດເຊຍ



* ນາງ ຄອນໂດລີຊາ ໄຣສ, ລັດຖະມົນຕີການຕ່າງປະເທດ ສ.ອາເມລິກາ ໄດ້ເດີນທາງເຖິງມົສກູ ໃນວັນທີ 19 ເມສາປີ້ ເພື່ອກະກຽມໃຫ້ແກ່ການຢ້ຽມຢາມຣັດເຊຍ ຂອງປະທານາທິບໍດີ ຈອດດັບເບີນຢູ ບຸສ ແຫ່ງ ສ.ອາເມລິກາ ທີ່ຈະມີຂຶ້ນໃນເດືອນພຶດສະພາປີນີ້. ນອກຈາກການຢ້ຽມຢາມຣັດເຊຍ ແລ້ວ, ປະທານາທິບໍດີ ບຸສ ກໍຈະເຂົ້າຮ່ວມພິທີສະເຫຼີມສະຫຼອງ ວັນຊະນະຟາດຊິດ ຄົບຮອບ 60 ປີ (9/5/1945 - 9/5/2005) ອີກດ້ວຍ.

ນາງ ໄຣສ ກ່າວໃນຂະນະທີ່ຢູ່ຢ້ຽມຢາມຣັດເຊຍເທື່ອນີ້ ວ່າ ຣັດເຊຍ ເປັນ "ຄູ່ຮ່ວມມືຍຸດທະສາດ" ພ້ອມທັງກ່າວຊຸກຍູ້ ໃຫ້ມີການເພີ່ມທະວີການຮ່ວມມື ໃນຫຼາຍຂົງເຂດວຽກງານສຳຄັນຕໍ່ໄປ.

ເມື່ອກ່າວຕໍ່ນັກຂ່າວອີເຄີຍ... ກະຈາຍສຽງພິເສດຂອງຣັດເຊຍ ກ່ອນທີ່ຈະພົບປະກັບປະທານາທິບໍດີ ວາລາດີເມຍ ປູຕິນ ແລະ ລັດຖະມົນຕີການຕ່າງປະເທດ ແຊກເກ ລາວາຣອບ ແຫ່ງຣັດເຊຍນັ້ນ, ນາງ ໄຣສ ເວົ້າວ່າ: "ຣັດເຊຍ ບໍ່ເປັນສັດຕູ ບຸດທະສາດ. ພວກເຮົາ (ສ.ອາເມລິກາ) ບໍ່ຕ້ານກັບຣັດເຊຍ. ພວກເຮົາຖືວ່າຣັດເຊຍ ເປັນຄູ່ຮ່ວມມືຍຸດທະສາດ ໃນການຕໍ່ຕ້ານການກໍ່ການຮ້າຍ, ໃນວຽກງານສະກັດກັ້ນການແຜ່ຂະຫຍາຍອາວຸດທຳລາຍມະຫາຊົນ ກໍຄືການແກ້ໄຂບັນຫາຕ່າງໆ ເຊັ່ນ ບັນຫາບານກັງ ແລະ ບັນຫາຕາເວັນອອກກາງ"

ທ້ອນຖະແຫຼງດັ່ງກ່າວຂອງນາງ ໄຣສ ເປັນຄຳເວົ້າທີ່ກົງກັນຂ້າມ ກັບຄຳຕຳນິ ທີ່ນາງໄດ້ປາອອກມາ ກ່ອນທີ່ຈະເດີນທາງເຖິງມົສກູ ນັ້ນ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

30ປີ

2/12/1975-2/12/2005

# 30 ປີແຫ່ງການເຕີບໃຫຍ່ ຂະຫຍາຍຕົວຂອງອົງການຍຸຕິທຳ

*(ຕໍ່ຈາກສະບັບກ່ອນ)*

ການປະກອບສ່ວນຂອງອົງການຍຸຕິທຳ ໃນການປົກປັກຮັກສາລະບອບປະຊາທິປະໄຕ ປະຊາຊົນ, ໄດ້ເປັນປັດໃຈສຳຄັນອັນໜຶ່ງ ໃຫ້ສປປ ລາວ ໄດ້ປັບປຸງລັດຖະທຳມະນູນຂອງຕົນໃນປີ 2003 ຊຶ່ງເປັນພື້ນໃຫ້ກົງຈັກຍຸຕິທຳຕ້ອງໄດ້ປັບປຸງໃຫ້ມີຄວາມຄ່ອງຕົວ: ໃນເມື່ອກ່ອນລະບົບສານປະຊາຊົນປະກອບດ້ວຍສານຂັ້ນຕົ້ນ ສານຂັ້ນອຸທອນ ແລະ ສານຂັ້ນຄັດຄ້ານ ກວດກາ. ສານປະຊາຊົນຂັ້ນແມ່ນໄດ້ຖືກຊີ້ນຳທາງດ້ານການຈັດຕັ້ງ ໂດຍກະຊວງຍຸຕິທຳ ແຕ່ປະຈຸບັນຕາມລັດຖະທຳມະນູນສະບັບປັບປຸງໃໝ່ນີ້, ລະບົບສານປະຊາຊົນ ແມ່ນປະກອບດ້ວຍສານຂັ້ນຕົ້ນ, ສານອຸທອນ ແລະ ສານຂັ້ນລົບລ້າງ ແລະ ຊຶ່ງທັງໝົດຈະເປັນສານແມ່ນຢູ່ພາຍໃຕ້ການຊີ້ນຳຂອງສານປະຊາຊົນສູງສຸດ. ການເປັນໃຫ້ມີສານທັງໝົດຂັ້ນນັ້ນກໍ ເພື່ອຮັບປະກັນໃຫ້ລະບົບການທຳ ເປັນເອກະພາບ ມີຄວາມຮັບປະກັນຄວາມຖືກຕ້ອງຍຸຕິທຳກວ່າເກົ່າ.

ການປ່ຽນແປງດັ່ງກ່າວ ເປັນຜົນງານອັນສຳຄັນທີ່ຊີ້ໃຫ້ເຫັນວ່າ ລັດຂອງ ສປປ.ລາວ ຊຶ່ງຢູ່ພາຍໃຕ້ການນຳພາຂອງພັກໄດ້ຕັ້ງໜ້າ ການປົກຄອງດ້ວຍກົດໝາຍການແບ່ງ ຄວາມຮັບຜິດຊອບລະຫວ່າງກົງຈັກສານປາກົດຢ່າງແທ້ຈິງ.

ທັງໄດ້ຍົກລະດັບກົງຈັກຍຸຕິທຳໃຫ້ເຂົ້າສູ່ມາດຕະຖານຂອງກົນລະອຽດກວ່າເກົ່າ, ຊຶ່ງໄດ້ເພີ່ມທະວີຄວາມເຂັ້ມແຂງ ທັງຄົນ ທັງພາຫະນະ ແລະ ບອກປະແດກ່ອວຽກງານຍຸຕິທຳຂອງ ສປປ ລາວ ນັ້ນ. ຊຶ່ງຄວນເຫັນວ່າພາຍໃນ ລະ 30 ປີ ທີ່ມີການນຳພາ ແລະ ໄລຍະ 30 ປີທີ່ມີການສ້າງສາບາດໃນເສັ້ນທາງນີ້.

ການຕໍ່ສູ້ຂອງປະຊາຊົນລາວຢູ່ນອກຂອງວຽກງານລາວ ນັບແຕ່ເຂົ້າເມື່ອຄວາມຍຸຕິທຳ ນາຍພື້ນຖານນຳມາຂອງພັກ ແມ່ນໄດ້ປັບປຸງລະບົບກົດໝາຍ ໃນເມື່ອງກັນຂອງ, ສ້າງ ແລະ ປັບປຸງລະບຽບກົດໝາຍອອກໄດ້ເກືອບ 40 ສະບັບທີ່ມີຜົນບັງຄັບໃຊ້ຢູ່ໃນປັດຈຸບັນ.

ເຖິງຢ່າງໃດກໍຕາມ ຄວາມຍຸຕິທຳໃນສັງຄົມຂອງ ສປປ.ລາວ ກໍຍັງບໍ່ທັນເຂັ້ມແຂງ ບໍ່ທັນກວ້າງຂວາງ ແລະ ບໍ່ທັນຂອບເຂດເທື່ອ, ຊຶ່ງມີເພາະວ່າເປັນກົດເກນຢ່າງສະເໝີ ແລະ ເປັນກັນການເລີ່ມຕົ້ນ ສຳລັບຂອງລະບອບປະຊາທິປະໄຕປະຊາຊົນ ໃຫ້ການເປັນເຈົ້າຂອງຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນຢ່າງແທ້ຈິງນັ້ນ. ຍັງບໍ່ທັນໄດ້ຢ່າງເຕັມສ່ວນເທື່ອ. ມີຈຸດບົກຜ່ອງໃນການສ້າງລະບຽບກົດໝາຍ ການລະເມີດສິດເປັນເຈົ້າ ກໍາລະສິດ ແລະ ສິດທິພື້ນຖານຂອງພົນລະເມືອງ, ການແກ້ໄຂຄະດີ ການປະຕິບັດຄະດີຍັງມີຄວາມບໍ່ທັນຖືກຕ້ອງຍຸຕິທຳໄດ້ເທົ່າທີ່ຄວນ.

ສາເຫດທີ່ເປັນດັ່ງນີ້ກໍເພາະວ່າ:

-ພື້ນຖານລະບົບວຽກງານຍຸຕິທຳ ພວມຢູ່ໃນໄລຍະເລີ່ມ ທັງດ້ານປະລິມານແລະຄຸນນະພາບ ເປັນເຫຼັ້ນນະບັນຫາຢູ່ຂັ້ນເມືອງ ແລະ ກຸ່ມບ້ານ.

-ການປະກອບເປັນພະນັກງານເຈົ້າໜ້າທີ່ ແລະ ມາດຕະການປັບປຸງໃຫ້ແທດເໝາະກັບຄວາມສຳຄັນຂອງວຽກງານ.

ການປຸກລະດົມ ສຶກສາອົບຮົມ ແລະ ເຜີຍແຜ່ກົດໝາຍໃຫ້ລົງເລິກໃສ່ການສ້າງພື້ນຖານຄວາມຮູ້ຂອງປະຊາຊົນ ກ່ຽວກັບລະບຽບກົດໝາຍ ເພື່ອປົກປ້ອງສິດທິຕາມກົດໝາຍຂອງ ສປປ.ລາວ ເອົາໃຫ້ທົ່ວເຖິງ.

-ການປຸກລະດົມໂຄສະນາເຜີຍແຜ່ເພື່ອໃຫ້ສັງຄົມມີຄວາມເຂົ້າໃຈ ແລະ ປະຕິບັດກົດໝາຍໃນທົ່ວສັງຄົມ ກໍຄືຄວາມເຂັ້ມງວດໃນການປະຕິບັດກົດໝາຍຂອງທຸກພາກສ່ວນ ແລະ ມີລະບຽບຫຼັກການໃນການ ພະນັກງານໃຫ້ພະນັກງານ ເຈົ້າໜ້າທີ່ໃນກົງຈັກພວກເຂົາຕ້ອງເປັນແບບຢ່າງທີ່ດີໃນການເຄົາລົບ ແລະ ປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ

-ການສ້າງພື້ນຖານລະບຽບກົດໝາຍ ແລະ ກົນໄກໃນການຈັດຕັ້ງປະຕິບັດ ແລະ ສອດຄ່ອງກັບກົດໝາຍ, ການແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃຫ້ສຳເລັດ,

...

ຕ້ອງການຂາຍສວນໄມ້ສັກທອງ

• ສວນໄມ້ສັກທອງປູກມາໄດ້ 7 ປີ ຈຳນວນ 25,000ຕົ້ນ ໃນເນື້ອທີ່ 5,8 ເຮັກຕາ. ຕັ້ງຢູ່ບ້ານຫ້ວຍປ່າ, ເມືອງທຸລະຄົມ ໃກ້ກັບທາງເລກ (ປະກອບເອກະສານຄົບ).

ສະຖານທີ່ຕິດຕໍ່ສອບຖາມເປັນທີ່ຍອດເຍັ້ງ

• ສົນໃຈຕິດຕໍ່: 020 5509 271, 020 2432 731



ຮ້ານອາຫານລະບຽງລັດສະໝີ

• ເປີດບໍລິການອາຫານບຸບເຟ່ ວັນທີ 31-1-05 ເປັນຕົ້ນໄປ.

ລາຄາ 20.000 K/ຄົນ. ເລີ່ມເວລາ 10:00 - 14:00 ໂມງ ທຸກໆວັນ.

• ບໍລິການອາຫານຕາມສັ່ງ ອາຫານລາວ-ຈີນ-ໄທ ລາຄາເປັນກັນເອງ

(ງານວັນເກີດ ຈະມີເຄັກໃຫ້ 1 ກ້ອນ)

• ຮັບບໍລິການຈັດງານລ້ຽງຕ່າງໆ ໃນ ແລະ ນອກສະຖານທີ່.

• ຮັບບໍລິການກຸ່ມຄົນເປັນພິເສດ.

# ງ່າໄມ້ແລະສາຍໄຟໃນລະດູຝົນ



*** ຈານແກ້ວ

• ຫຼືວ່າໂຊກດີຫຼັກຢ່າງໜຶ່ງທີ່ປະເທດລາວພວກເຮົາບໍ່ໄດ້ຕັ້ງຢູ່ໃນເຂດທີ່ມີໄພທຳມະຊາດຮ້າຍແຮງ ເຊັ່ນພູໄຟລະເບີດ, ແຜ່ນດິນໄຫວ, ພະຍຸຮ້າຍດັ່ງທີ່ຫລາຍປະເທດເປັນຢູ່, ແຕ່ນັ້ນກໍຄວນມີສະຕິລະວັງຄືໄວ້ສະເໝີເພາະຜ່ານມາໄພທຳມະຊາດລະດັບນ້ອຍລະດັບກາງກໍດັ່ງມີມີເກີດໜື່ງ ສ້າງຄວາມຫວາດກົວແລະເສຍຫາຍໃນລະດັບໃດໜຶ່ງ ເຊັ່ນກັນເຊັ່ນເມື່ອປີຜ່ານມາລະບົບສາຍສົ່ງໄຟແຮງກາງແລະແຮງຕ່ຳລະຫວ່າງເມືອງປາກລາຍຫາເມືອງທົ່ງມີໄຊ ແຂວງໄຊຍະບູລີກໍຖືກພະຍຸລົມຝົນພັດລົ້ມເພແລະຂາດໄປ. ທາງລັດວິສາຫະກິດໄຟຟ້າລາວຕ້ອງໄດ້ລົງທຶນຫລາຍສົມຄວນເພື່ອປັບປຸງລະບົບໃໝ່.

ແນວໃດກໍ່ແມ່ນລະດູຝົນສະເພາະແມ່ນຊ່ວງໄລຍະລະດູແລ້ງຕໍ່ໃສ່ລະດູຝົນ. ມັກຈະມີລົມແຮງພັດແກວ່ງ ຫລາຍບ່ອນເຖິງຂັ້ນມີຕົ້ນໄມ້ເປັນເຄົ້າ, ສ້າງຄວາມຢ້ານກົວແກ່ຜູ້ທີ່ມີຕົ້ນໄມ້ໃຫຍ່ໃກ້ເຮືອນແລະໃກ້ສາຍໄຟຟ້າ ເພາະເມື່ອຕົ້ນໄມ້ ຫຼືງ່າຫັກທັບສາຍໄຟຟ້າແລ້ວ ຄວາມເສຍຫາຍຍ່ອມເກີດຂຶ້ນບໍ່ຫລາຍກໍ່ໜ້ອຍ ເຊັ່ນໄຟຟ້າຈະມອດ, ສາຍຈະຂາດຕ້ອງໄດ້ຕໍ່ຄືນໃໝ່, ຕ້ອງເສຍເວລາ, ຕ້ອງເສຍເງິນ ສິ່ງທີ່ຮ້າຍກວ່ານັ້ນຄືວ່າຖ້າຫາກຫັກທັບສາຍໄຟລວມກໍຈະເຮັດໃຫ້ເຮືອນອື່ນໄດ້ຮັບຄວາມເສຍປະໂຫຍດໄດ້. ເທົ່ານັ້ນກໍໂຊກດີຖ້າເກີດສາຍໄຟຕົກແຊ່ນ້ຳ, ຄົນຫຼືສັດໄປຜ່ານອາດຖືກໄຟຊັອດຕາຍໄດ້ແລະຜ່ານມາເຄີຍມີເຫດການທີ່ໜ້າເສົ້າສະຫລົດໃຈເກີດຂຶ້ນ. ຄົນເຫັນສາຍໄຟຂາດ, ຈຶ່ງໄດ້ເຮັດໜ້າທີ່ພົນລະເມືອງດີທີ່ຝ້າວລາຍງານໃຫ້ການຈັດຊື້ສິ່ງຂອງ... ມາກ່ອນຈະປ້ອງກັນເມື່ອປ້ອງກັນ, ແກ້ໄຂບໍ່ໃຫ້ເກີດອັນຕະລາຍ.

ສະນັ້ນ, ເພື່ອປ້ອງກັນບໍ່ໃຫ້ອຸບັດຕິເຫດເກີດຂຶ້ນສູ່ເປັນເຈົ້າຂອງເຮືອນ, ເຈົ້າຂອງຕົ້ນໄມ້ຈຶ່ງໄດ້ຕັດຮອນງ່າໄມ້, ຕົ້ນໄມ້ທີ່ເຫັນວ່າຢູ່ໃນລັດສະໝີທີ່ຄິດວ່າທີ່ບໍ່ແໜ້ນແກ່ນທີ່ອາດຈະຫັກທັບສາຍໄຟຟ້າໄດ້ຫລືວ່າແກວ່ງໄກວແຮງສູງເມື່ອ ສາຍໄຟຟ້າເມື່ອຖືກລົມພັດແຮງ. ເມື່ອບໍ່ແນ່ໃຈວ່າຈະຕັດຮອນໄດ້ຢ່າງປອດໄພກໍໃຫ້ເມືອງຕິດຕໍ່ປາຍສາຍທາງໄຟຟ້າເພື່ອຮ່ວມກັນແກ້ໄຂ ການທີ່ວັດຖຸສິ່ງຂອງຂອງເຮົາໄປເປັນສາເຫດໃຫ້ເກີດການການເສຍຫາຍແກ່ຜູ້ອື່ນຫລືແກ່ສິ່ງຄົນສິ່ງການກົດໝາຍແລ້ວ ຜູ້ເປັນເຈົ້າຂອງຍ່ອມມີສ່ວນຮັບຜິດຊອບຕໍ່ການເສຍຫາຍດັ່ງນັ້ນ.

ລະດູຝົນແມ່ນຍາມທີ່ເໝາະສົມແກ່ການປູກຕົ້ນໄມ້. ການປູກຕົ້ນໄມ້ກໍຄວນຄຳນຶງເຖິງວ່າເມື່ອຕົ້ນໄມ້ໃຫຍ່ຈະບໍ່ໄປເກາະກະສາຍໄຟຟ້າ. ຕ້ອງຮູ້ວ່າໄດ້ວ່າຕົ້ນໄມ້ທີ່ປູກນັ້ນເປັນປະເພດທີ່ໃຫຍ່ສູງສ່ຳໃດ ການລ້ຽງເບິ່ງຮັກສາຍາມໃດແລະມາເຟີ້ຍໄດ້ທີ່ເຖິງປັບຫາຄວາມປອດໄພທັງແກ່ນສາຍໄຟຂອງຜູ້ອື່ນແລະ...